# ຂອບໃຈສາວຫູ້ກເຈັດ

ໂດຍ: ບ່າວຫູ້ກເຈັດ

ເນື້ອໃນຄຳກອນນ້ອງ ຄຳຄົມຄ່ອງວາຈາ ແທ້ເດ
ນາງນັ້ນຂັນອາສາ ສິ່ງສັນຍາຈາໄວ້
ວ່າຊິມີເວລາໃຫ້ ຂຽນກອນເພື່ອຜູ້ອ່ານ
ພ້ອມທັງຄຣູອາຈານ ເພື່ອນນັກຮຽນທຸກທົ່ວຫນ້າ ສັນຍາໄວ້ວ່າບໍ່ຫນີ

ສາວຫູ້ກເຈັດຜູ່ນີ້ ຄວາມດີຍິ່ງມີເຫຼືອຫຼາຍ ຈິງໃດ
ນາງຂຍາຍຄຳກອນ ໃຫ້ຜ່ອນຄາຍຄວາມເສົ້າ
ຍາມໃດໃຈເຫງົາອັ້ນ ເຫັນສາລກອນນ້ອງແລ້ວຊື່ນ
ຄືກັບຫູ້ບແລ້ວຕື່ນ ຊື່ນຫົວໃຈໄດ້ອ່ານເຫຼັ້ນ ເຫັນກອນນ້ອງແລ້ວສວ່າງເຫງົາ

ຂໍຂອບໃຈນ້ອງເຈົ້າ ສາວຊ່າແດນຫູ້ກເຈັດ ອີ່ຫຼີໃດ
ມິດເພື່ອນຄຣູທັງຫຼາຍ ໄດ້ຊື່ນຊົມຜົລງານນ້ອງ
ປຽບທັງທອງພັນລ້ານ ຜົລງານນາງນັ້ນດີເດັ່ນ
ແຟນກອນທຸກເຂດແຄວ້ນ ຢາກເຫັນຫນ້ານັກປະພັນ ແທ້ເດ

ສິ່ງນ້ອງຫວັງໄວ້ນັ້ນ ຖ້າສານຕໍ່ຕ້ອງເປັນຈິງ ແທ້ໃດ
ນັກກອນຍິງ ສາວຫູ້ກເຈັດ ເດັດດັ່ງດວງຈັນແຈ້ງ
ເປັນແວ່ນແຍງຄອງເຄົ້າ ສັຕຣີລາວໃຫ້ສົມຊ່າ
ຊື່ສຽງກ້ອງໂລກາ ຄ່າຜູ່ຍິງມີພຽບພ້ອມ ຍິນດີນ້ອມອ້າຍຮັບຮອງ

ແມ່ນອນຝັນຂອງນ້ອງ ໄປລ່ອງຊ່ອງເປັນຄວາມຈິງ
ສິ່ງສຳຄັນຄືຄວາມພຽນ ຊີລ່ຽນໄຫຼເມືອໜ້າ
ຢ່າທໍ້ຖອຍພອຍລ້າ ບາງເວລາໝູ່ບໍ່ຕອບ
ຄອບເພິ່ນຄາວຽກຫຍຸ້ງ ໃຈຍັງມຸ້ງເຂົ້າອ່ານກອນ ຢູ່ດີ

ຢ່າໃຫ້ມັນສະທ້ອນ ຄອນແຄນອວ່າຍກຳລັງໃຈ
ອ້າຍຂໍຢືນຄຽງກາຍ ບໍ່ຈາກໄປໃສແທ້
ຈະບໍ່ແຂເຊືອນຮ້າງ ຫຼືຫຼົງທາງຕີຈາກ
ພັດພາກກັນຄາວກ່ອນກີ້ ແຕ່ຄາວນີ້ ອ້າຍຢູ່ຄຽງ ເຈົ້າແລ້ວ